ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------------

ຊື່ຜູ້ຈັດຊື້-ຈັດຈ້າງ : ສະມາຄົມ ລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ
ຊື່ໂຄງການ : ໂຄງການ ສົ່ງເສີມການມີສ່ວນຮ່ວມຈາກຊຸມຊົນ ເພື່ອການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ແບບຍືນຍົງ ທີ່ເມືອງ ຫີນເຫີບ ແລະ ເມືອງ ວັງວຽງ ແຂວງ ວຽງຈັນ.
ສັນຍາເລກທີ : CBI-025-NNO

ເລກທີ: 492/ສພຊບ
ວັນທີ : 01 ກັນຍາ 2026

## ຫນັງສືແຈ້ງເຊີນປະມູນ

1. ສະມາຄົມ ລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມເຂົ້າຍື່ນຊອງປະມູນ ສໍາລັບສະຫນອງເບ້ຍໄມ້ໃຫ້ຊຸມຊົນ ເຂດບ້ານເປົ້າໝາຍໂຄງການ. ໄລຍະການຈັດສົ່ງ-ມອບຮັບໂຄງການແມ່ນ 30 ວັນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ແລະ ມີໃບອານຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍລາວ ແລະ ເໝາະສົມກ່ຽວພັນກັບໜ້າວຽກ.
4. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈຊື້ຊອງປະມູນຄົບຊຸດພາສາລາວ ສາມາດຕິດຕໍ່ພົວພັນໄດ້ທີ່ ສະມາຄົມ ລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ, ເຮືອນເລກທີ 360, ບ້ານໜອງບອນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 0202222 7595; Email: laodhrra@gmail.com. ຈະເລີ່ມຂາຍຊອງປະຊຸມ ແຕ່ວັນທີ 01 ກັນຍາ 2026 ຈົນເຖິງ ວັນທີ 05 ຕຸລາ 2026 (ໃນໂມງລັດຖະການ), ໃນລາຄາ 500,000 ກີບ/ຊອງ (ຫ້າແສນກີບ), ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ , ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຈະຕ້ອງສົ່ງ ກ່ອນເວລາ 09:00 ໂມງ ຂອງ ວັນທີ 05 ຕຸລາ 2026, ທີ່ ສະມາຄົມລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ, ເຮືອນເລກທີ 360, ບ້ານໜອງບອນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງ ວັນທີ 05 ຕຸລາ 2026 ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນຄັ້ງນີ້ດ້ວຍ.

ປະທານສະມາຄົມ (ຫົວໜ້າຄະນະຈັດຊື້-ຈັດຈ້າງ)

ສະມາຄົມ ລາວພັດທະນາຊັບພະຍາກອນມະນຸດໃນເຂດຊົນນະບົດ

ບຸນອຸ້ມ ດວງພະຈັນ
BounOum DOUANGPHRACHANH